ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດລາຍງານສະຖິຕິເງິນຕາ

## ປະຈຳໄຕມາດ ທີ 1 ຂອງປີ 2020

ທະນາຄານແຫ່ງ ສປປ ລາວ

# ສາລະບານ


I. ສະພາບລວມ .......... 1

II. ອັດຕາເງິນເຟີ້ .......... 1

III. ຂະແໜງເງິນຕາ-ການເງິນ .......... 2

3.1. ນະໂຍບາຍເງິນຕາ .......... 2

3.2. ຖານເງິນຕາ .......... 2

3.3. ປະລິມານເງິນ .......... 3

3.4. ອັດຕາແລກປ່ຽນ .......... 3

3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ .......... 4

3.6. ອັດຕາດອກເບ້ຍ .......... 4

3.7. ເງິນຝາກ .......... 5

3.8. ສິນເຊື່ອ .......... 5

3.9. ຕະຫຼາດຫຼັກຊັບ .......... 6

IV. ດຸນການຊໍາລະກັບຕ່າງປະເທດ .......... 7

4.1. ດຸນການຊໍາລະລວມ .......... 7

4.2. ດຸນບັນຊີຊໍາລະປົກກະຕິ .......... 8

4.2.1 ດຸນການຄ້າ .......... 8

4.3. ດຸນບັນຊີການເງິນ .......... 10

# ສາລະບານຮູບ


ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້ ........ 1
ຮູບທີ 2. ການປະກອບສ່ວນ ຕໍ່ອັດຕາເງິນເຟີ້ລວມ ........ 2
ຮູບທີ 3. ໂຄງປະກອບຂອງຖານເງິນຕາ ........ 3
ຮູບທີ 4. ການຂະຫຍາຍຕົວຂອງປະລິມານເງິນ M2 ........ 3
ຮູບທີ 5. ການເໜັງຕີງຂອງອັດຕາແລກປ່ຽນ (ໄຕມາດທຽບໄຕມາດ) ........ 4
ຮູບທີ 6. ເງິນຝາກຂອງທະນາຄານທຸລະກິດ ........ 5
ຮູບທີ 7. ການປະກອບສ່ວນຂອງສິນເຊື່ອ (ແຍກຕາມຂະແໜງການ) ........ 6
ຮູບທີ 8. ດຸນການຊໍາລະກັບຕ່າງປະເທດ ........ 8
ຮູບທີ 9. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ ........ 8
ຮູບທີ 10. ການນໍາເຂົ້າສິນຄ້າ ........ 9
ຮູບທີ 11. ການສົ່ງອອກສິນຄ້າ ........ 9
ຮູບທີ 12. ດຸນບັນຊີການເງິນ ........ 10

# ສາລະບານຕາຕະລາງ


ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານເດືອນ 12/2015 = 100) ........................................... 11
ຕາຕະລາງທີ 2. ອັດຕາເງິນເຟີ້ (%) ........................................................................................................ 11
ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ) .................................................. 12
ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ) ............................................................ 13
ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ) ............................................................... 14
ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (ຕື້ກີບ) ....................................................................... 15
ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ ....................................................... 16
ຕາຕະລາງທີ 8. ອັດຕາດອກເບ້ຍ (ຄິດເປັນສ່ວນຮ້ອຍຕໍ່ປີ) .................................................................... 17
ຕາຕະລາງທີ 9. ເງິນຝາກຂອງທະນາຄານທຸລະກິດ (ຕື້ກີບ) ..................................................................... 18
ຕາຕະລາງທີ 10. ເງິນຝາກຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (ຕື້ກີບ) ................................. 19
ຕາຕະລາງທີ 11. ສິນເຊື່ອຂອງທະນາຄານທຸລະກິດ (ຕື້ກີບ) ................................................................... 20
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (ຕື້ກີບ) ................................. 21
ຕາຕະລາງທີ 13. ດຸນການຊໍາລະກັບຕ່າງປະເທດ (ລ້ານໂດລາ) ................................................................ 22
ຕາຕະລາງທີ 14. ການຄ້າຕ່າງປະເທດ (ລ້ານໂດລາ) ............................................................................... 24
ຕາຕະລາງທີ 15. ທີ່ຕັ້ງສໍານັກງານຂອງແຕ່ລະທະນາຄານທຸລະກິດ .......................................................... 25

# ບົດນຳ

ໃນບົດລາຍງານສະຖິຕິເງິນຕາປະຈຳໄຕມາດ ແມ່ນການສັງລວມຂໍ້ມູນສະຖິຕິເງິນຕາ ຂອງຂະແໜງການທະນາຄານ ຊຶ່ງກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳສັງລວມ ແລ້ວເຜີຍແຜ່ບົດລາຍງານສະຖິຕິເງິນຕານີ້ ທາງເວັບໄຊຂອງ ທຫລ ເພື່ອໃຫ້ສັງຄົມໄດ້ນຳໃຊ້ຕາມຄວາມຈຳເປັນ ແລະ ຕ້ອງການຂອງແຕ່ລະພາກສ່ວນ.

ເຖິງຢ່າງໃດກໍຕາມ, ມີບາງຂໍ້ມູນໃນບົດລາຍງານສະບັບນີ້ ຍັງເປັນຕົວເລກຄາດຄະເນເບື້ອງຕົ້ນ ແລະ ອາດມີການປັບປຸງຂໍ້ມູນຄືນ. ສະນັ້ນ, ຂ້າພະເຈົ້າຕາງໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍອະໄພມາຍັງທຸກໆທ່ານມານະທີ່ນີ້ດ້ວຍ. ພ້ອມນີ້, ຂໍຮັບເອົາຄຳຕິຊົມຕ່າງໆຈາກທ່ານຜູ້ຊົມໃຊ້ດ້ວຍຄວາມຈິງໃຈ ເພື່ອການປັບປຸງບົດລາຍງານສະຖິຕິເງິນຕາສະບັບຕໍ່ໄປ ໃຫ້ມີຄວາມສົມບູນຍິ່ງຂຶ້ນ.

**ຫົວໜ້າກົມນະໂຍບາຍເງິນຕາ**

ຄຳພຸດ ສິດທິລາດ

# I. ສະພາບລວມ

ໃນໄຕມາດ 1 ຂອງປີ 2020, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດຳເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນຳໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນໄດ້ປັບຫຼຸດອັດຕາດອກເບ້ຍພື້ນຖານຂອງ ທຫລ ຈາກ 4% ຕໍ່ປີ ເປັນ 3% ຕໍ່ປີ, ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ ຈາກ 5% ເປັນ 4% ສຳລັບເງິນກີບ ແລະ 10% ເປັນ 8% ສຳລັບເງິນຕາຕ່າງປະເທດ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ, ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍ ຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ, ທຫລ ສາມາດຮັກສາສະເຖຍລະພາບເງິນຕາແຫ່ງຊາດໄດ້ ສະແດງອອກຄື: ອັດຕາເງິນເຟີ້ ຢູ່ໃນລະດັບ 6,44% ທຽບໃສ່ໄຕມາດຜ່ານມາ, ອັດຕາແລກປ່ຽນເງິນກີບທຽບເງິນໂດລາ ອ່ອນຄ່າ 0,77%; ປະລິມານເງິນ (M2) ເພີ່ມຂຶ້ນ 2,92%; ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 3,21%; ສິນເຊື່ອຂອງທະນາຄານທຸລະກິດ ຂະຫຍາຍຕົວ 0,87%; ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ 3,67 ເດືອນ. ນອກຈາກນີ້, ດ້ານການຄ້າກັບຕ່າງປະເທດ ມູນຄ່າການຄ້າ ບັນລຸ 2.957,79 ລ້ານໂດລາ. ໃນນັ້ນ, ມູນຄ່າການສົ່ງອອກ ບັນລຸ 1.555,62 ລ້ານໂດລາ, ເພີ່ມຂຶ້ນ 3,87% ແລະ ມູນຄ່າການນຳເຂົ້າ 1.402,17 ລ້ານໂດລາ, ຫຼຸດລົງ 23,58% ທຽບໃສ່ໄຕມາດຜ່ານມາ.

# II. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນໄຕມາດ 1 ຂອງປີ 2020 ຢູ່ໃນລະດັບ 6,44% ເພີ່ມຂຶ້ນຈາກລະດັບ 5,85% ໃນໄຕມາດ 4/2019. ສາເຫດຂອງການເພີ່ມຂຶ້ນມາຈາກໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ ເພີ່ມຂຶ້ນຈາກ 9,76% ມາເປັນ 10,24% ຕົ້ນຕໍແມ່ນການເພີ່ມຂຶ້ນຂອງລາຄາຊີ້ນໝູ, ຊີ້ນງົວ, ສັດປີກ ແລະ ປາ. ນອກຈາກນີ້, ລາຄາໝວດຄົມມະນາຄົມ ແລະ ການຂົນສົ່ງ ກໍເພີ່ມຂຶ້ນ ຈາກການປັບຂຶ້ນຂອງລາຄານ້ຳມັນເຊື້ອໄຟພາຍໃນ ເມື່ອທຽບກັບໄລຍະດຽວກັນຂອງປີຜ່ານມາ.

**ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ຮູບທີ 2. ການປະກອບສ່ວນ ຕໍ່ອັດຕາເງິນເຟີ້ລວມ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# III. ຂະແໜງເງິນຕາ-ການເງິນ

## 3.1. ນະໂຍບາຍເງິນຕາ

ໃນໄຕມາດ 1 ຂອງປີ 2020, ທຫລ ໄດ້ດຳເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນຳໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນໄດ້ປັບຫຼຸດອັດຕາດອກເບ້ຍພື້ນຖານຂອງ ທຫລ ຈາກ 4% ຕໍ່ປີ ເປັນ 3% ຕໍ່ປີ[1], ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ ຈາກ 5% ເປັນ 4% ສຳລັບເງິນກີບ ແລະ 10% ເປັນ 8% ສຳລັບເງິນຕາຕ່າງປະເທດ[2], ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍ ຢ່າງເປັນປົກກະຕິ.

## 3.2. ຖານເງິນຕາ

ຮອດທ້າຍໄຕມາດ 1 ຂອງປີ 2020, ຖານເງິນຕາ ມີຍອດເຫຼືອ 28.836,57 ຕື້ກີບ, ເພີ່ມຂຶ້ນ 5,53% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 16,56% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ຖານເງິນຕາເພີ່ມຂຶ້ນໃນໄຕມາດນີ້ ແມ່ນຍ້ອນ ທຫລ ລ່ວງໜ້າເພື່ອດຸ່ນດ່ຽງງົບປະມານ ປະຈຳປີ 2020 ແລະ ລັດຖະບານໄຖ່ຖອນພັນທະບັດໃຫ້ ທທກ.

---

[1] ອີງຕາມຂໍ້ຕົກລົງກ່ຽວກັບການປັບຫຼຸດອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 240/ທຫລ, ລົງວັນທີ 30 ມີນາ 2020.

[2] ອີງຕາມຂໍ້ຕົກລົງວ່າດ້ວຍການປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ, ສະບັບເລກທີ 226/ທຫລ, ລົງວັນທີ 20 ມີນາ 2020.

**ຮູບທີ 3. ໂຄງປະກອບຂອງຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.3. ປະລິມານເງິນ

ປະລິມານເງິນ (M2) ມີຍອດທັງໝົດ 98.994,50 ຕື້ກີບ, ເພີ່ມຂຶ້ນ 2,92% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 17,70% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍຍ້ອນກະແສເງິນລົງທຶນຈາກຕ່າງປະເທດໃນຂະແໜງການອຸດສາຫະກໍາ, ການປ່ອຍສິນເຊື່ອໃຫ້ພາກສ່ວນເສດຖະກິດ ແລະ ການລະດົມເງິນຝາກ.

ອົງປະກອບຂອງປະລິມານເງິນ ປະກອບມີ: ເງິນຝາກເປັນສະກຸນເງິນກີບ 42,52%, ເງິນຝາກເປັນສະກຸນເງິນຕາຕ່າງປະເທດ 48,80% ແລະ ເງິນຢູ່ນອກລະບົບທະນາຄານ 8,68% (ຮູບທີ 4).

**ຮູບທີ 4. ການຂະຫຍາຍຕົວຂອງປະລິມານເງິນ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.4. ອັດຕາແລກປ່ຽນ

ທຫລ ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ເປັນເຄື່ອງມືຕົ້ນຕໍໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ຄື: ສືບຕໍ່ກໍານົດອັດຕາແລກປ່ຽນອ້າງອີງເງິນກີບທຽບເງິນໂດລາ ປະຈໍາວັນ ເພື່ອໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ປະຕິບັດໃນຂອບເຂດ ±0,25%

ແລະ ກຳນົດສ່ວນຕ່າງລະຫວ່າງອັດຕາຊື້-ຂາຍ ສຳລັບເງິນກີບທຽບເງິນເອີໂຣ 0,50%, ເງິນກີບທຽບເງິນບາດ 0,75% ແລະ 2% ສຳລັບເງິນກີບທຽບສະກຸນເງິນຕາອື່ນໆ.

ຜ່ານການຈັດຕັ້ງປະຕິບັດບັນດາມາດຕະການອັດຕາແລກປ່ຽນຄືດັ່ງກ່າວນັ້ນ, ອັດຕາແລກປ່ຽນມີການເໜັງຕີງຄື: ອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບທຽບເງິນໂດລາອ່ອນຄ່າ 0,77%, ຢູ່ໃນລະດັບ 9.060,72 ກີບ/ໂດລາ ແລະ ເງິນກີບທຽບເງິນບາດອ່ອນຄ່າ 0,56%, ຢູ່ໃນລະດັບ 299,96 ກີບ/ບາດ.

**ຮູບທີ 5. ການເໜັງຕີງຂອງອັດຕາແລກປ່ຽນ (ໄຕມາດທຽບໄຕມາດ)**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

ຮອດທ້າຍໄຕມາດ 1 ຂອງປີ 2020, ທະນາຄານທຸລະກິດ ມີຈຳນວນທັງໝົດ 43 ແຫ່ງ[3] (ຕາຕະລາງທີ 15). ໃນນັ້ນ, ທົ່ວລະບົບທະນາຄານທຸລະກິດ ມີຍອດຊັບສິນທັງໝົດ 150.575,03 ຕື້ກີບ, ເພີ່ມຂຶ້ນ 3,07%; ຍອດເງິນຝາກທັງໝົດ (ບໍ່ລວມເງິນຝາກຂອງບຸກຄົນບໍ່ຕັ້ງຖິ່ນຖານຢູ່ລາວ) 90.367,43 ຕື້ກີບ, ເພີ່ມຂຶ້ນ 3,21%.ໃນໄລຍະ 3 ເດືອນຜ່ານມາ, ທະນາຄານທຸລະກິດໄດ້ປະກອບສ່ວນຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ໃນນັ້ນ, ສິນເຊື່ອໃຫ້ພາກສ່ວນເສດຖະກິດ ມີຍອດທັງໝົດ 75.279,64 ຕື້ກີບ, ຂະຫຍາຍຕົວ 0,87%. ຄຽງຄູ່ກັນນັ້ນ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ມີທັງໝົດ 177 ແຫ່ງ[4].

## 3.6. ອັດຕາດອກເບ້ຍ

ໃນໄຕມາດນີ້, ອັດຕາດອກເບ້ຍເງິນຂອງທະນາຄານທຸລະກິດ ຢູ່ໃນລະດັບເດີມ. ໃນນີ້, ອັດຕາດອກເບ້ຍເງິນຝາກມີກຳນົດ 12 ເດືອນ ສະກຸນເງິນກີບ ຢູ່ໃນລະຫວ່າງ 3,00-5,80% ຕໍ່ປີ, ສະກຸນເງິນບາດ 0,80-6,00% ຕໍ່ປີ ແລະ ສະກຸນເງິນໂດລາ 0,70-6,25% ຕໍ່ປີ. ສຳລັບອັດຕາດອກເບ້ຍເງິນກູ້ຂອງ ທທກ ໄລຍະສັ້ນ ຂອງລູກຄ້າຊັ້ນດີ ສະກຸນເງິນກີບ ຢູ່ໃນລະຫວ່າງ 5,25-14,00% ຕໍ່ປີ, ສະກຸນເງິນບາດ 4,29-13,00% ຕໍ່ປີ ແລະ ສະກຸນເງິນໂດລາ 4,00-12,00% ຕໍ່ປີ.

[3] ໃນນັ້ນ, ມີ 114 ສາຂາ, 534 ໜ່ວຍບໍລິການ, 42 ໜ່ວຍແລກປ່ຽນເງິນຕາ ແລະ ຕູ້ ATM 1.302 ໜ່ວຍ.

[4] ໃນນັ້ນ, ສະຖາບັນການເງິນທີ່ຮັບຝາກ 20 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 76 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 26 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 29 ແຫ່ງ ແລະ ໂຮງຊວດຈຳ 26 ແຫ່ງ.

## 3.7. ເງິນຝາກ

ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງຜູ້ທີ່ບໍ່ຕັ້ງຖິ່ນຖານຢູ່ ສປປ ລາວ) ມີຍອດທັງໝົດ 90.367,43 ຕື້ກີບ, ເພີ່ມຂຶ້ນ 3,21% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 17,35% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 4,91%, ກວມເອົາ 46,54% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 1,76%, ກວມເອົາ 53,46% ຂອງເງິນຝາກທັງໝົດ.

**ຮູບທີ 6. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.8. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ຮອດທ້າຍໄຕມາດ 1 ຂອງປີ 2020 ມີຍອດທັງໝົດ 75.279,63 ຕື້ກີບ, ຂະຫຍາຍຕົວຢູ່ໃນລະດັບ 0,87% ທຽບໃສ່ໄຕມາດຜ່ານມາ ແລະ 7,91% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ສິນເຊື່ອທີ່ຂະຫຍາຍຕົວຫຼາຍກວ່າໝູ່ແມ່ນ ຂະແໜງກໍ່ສ້າງ 9,62%, ຂະແໜງການບໍລິການ 4,71%, ຂະແໜງຂົນສົ່ງ 4,39%, ຂະແໜງການອຸດສາຫະກຳ 1,22%. ໃນຂະນະທີ່, ສິນເຊື່ອບາງຂະແໜງການຫຼຸດລົງ ເປັນຕົ້ນແມ່ນຂະແໜງກະສິກຳ 5,75%, ຂະແໜງຫັດຖະກຳ 4,45%, ຂະແໜງສະໜອງວັດຖຸ ແລະ ເຕັກນິກ 3,13%, ຂະແໜງການອື່ນໆ 2,89% ແລະ ຂະແໜງການຄ້າ 2,28%.

**ຮູບທີ 7. ການປະກອບສ່ວນຂອງສິນເຊື່ອ (ແຍກຕາມຂະແໜງການ)**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.9. ຕະຫຼາດຫຼັກຊັບ

ໃນໄຕມາດທີ 1 ຂອງປີ 2020, ດັດຊະນີຕະຫຼາດຫຼັກຊັບລາວປິດຢູ່ທີ່ 625,05 ຈຸດ, ຫຼຸດລົງ 8,81% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 14,15% ທຽບໃສ່ດັດຊະນີທ້າຍປີຜ່ານມາ; ມີປະລິມານການຊື້-ຂາຍຮຸ້ນທັງໝົດ 3,82 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍທັງໝົດ 19,87 ຕື້ກີບ, ຫຼຸດລົງ 9,47% ທຽບໃສ່ໄຕມາດຜ່ານມາ. ໃນນັ້ນ, ມູນຄ່າການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ກວມອັດຕາສ່ວນ 50,75% ຂອງມູນຄ່າການຊື້-ຂາຍຮຸ້ນທັງໝົດ. ສາເຫດທີ່ມູນຄ່າຊື້-ຂາຍຮຸ້ນທັງໝົດ ຫຼຸດລົງໃນໄຕມາດນີ້ ແມ່ນມາຈາກການຫຼຸດລົງຂອງການຊື້-ຂາຍຮຸ້ນຂອງບໍລິສັດ ມະຫາທຶນເຊົ່າສິນເຊື່ອ ມະຫາຊົນ (MHTL) ແລະ ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ (LALCO) ຍ້ອນວ່ານັກລົງທຶນຕ່າງປະເທດ ພາກັນມາຕ້ອນຊື້ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເປັນສ່ວນໃຫຍ່ ຈາກນັກລົງທຶນພາຍໃນ ແລະ ຕ່າງປະເທດດ້ວຍກັນເອງ.

### ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ຊື່ບໍລິສັດ | ໄຕມາດ 1/2020 | | | ໄຕມາດ 4/2019 | | | % ການປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາປິດ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາປິດ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາ |
| **ດັດຊະນີປິດ** | | **625,05** | | | **685,47** | | | | **-8,81** |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 2.482.900 | 16.309.050.000 | 6.150 | 2.474.900 | 14.683.400.000 | 6,550 | 0,32 | 11,07 | -6,11 |
| ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ | 949.000 | 2.969.769.000 | 2.800 | 949.900 | 2.932.947.000 | 3,100 | -0,09 | 1,26 | -9,68 |
| ບໍລິສັດ ລາວເວີນ ມະຫາຊົນ | 100 | 1150000 | 11.500 | 100 | 785.000 | 9,450 | 0,00 | 46,50 | 21,69 |
| ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ | 8.100 | 4.944.500 | 575 | 693.100 | 303.407.000 | 600 | -98,83 | -98,37 | -4,17 |
| ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ | 6.500 | 12.730.000 | 1.900 | 11.400 | 23.080.000 | 2,000 | -42,98 | -44,84 | -5,00 |
| ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ | 111.200 | 112.380.500 | 510 | 12.100 | 12.417.000 | 1,000 | 819,01 | 805,05 | -49,00 |
| ບໍລິສັດ ຊີມັງລາວ ມະຫາຊົນ | 78.500 | 170.906.000 | 2.000 | 17.300 | 31.879.000 | 1,900 | 353,76 | 436,11 | 5,26 |
| ບໍລິສັດ ມະຫາທຶນເຊົ່າສິນເຊື່ອ ມະຫາຊົນ | 70.200 | 200.467.000 | 2.850 | 819.600 | 2.178.612.000 | 2,880 | -91,44 | -90,80 | -1,04 |
| ບໍລິສັດ ລາວອາໂກຣເທັກ ມະຫາຊົນ | 110.900 | 83.866.000 | 870 | 11.400 | 9.217.000 | 870 | 1079,79 | 1001,04 | 0,00 |
| ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ | 1.400 | 1.686.000 | 1.250 | 623.600 | 653.559.000 | 1,100 | -99,78 | -99,74 | 13,64 |
| ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ | 2.900 | 6.040.000 | 2.030 | 384.100 | 1.123.696.000 | 2,000 | -99,24 | -99,46 | 1,50 |
| **ທັງໝົດ** | **3.821.700** | **19.872.989.000** | | **5.997.500** | **21.952.999.000** | | **-36,26** | **-9,47** | |

**ແຫຼ່ງຂໍ້ມູນ:** ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທະນາຄານແຫ່ງ ສປປ ລາວ.

# IV. ດຸນການຊຳລະກັບຕ່າງປະເທດ

## 4.1. ດຸນການຊຳລະລວມ

ດຸນຊຳລະກັບຕ່າງປະເທດ ປະຈຳໄຕມາດ 1 ຂອງປີ 2020, ດຸນການຊຳລະລວມ ເກີນດຸນ 7,85 ລ້ານໂດລາ. ໃນນັ້ນ, ດຸນບັນຊີຊຳລະປົກກະຕິ ເກີນດຸນ 47,86 ລ້ານໂດລາ ແລະ ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າສຸດທິ 352,14 ລ້ານໂດລາ. ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າສິນຄ້າໄດ້ 3,67 ເດືອນ[5].

[5] ມູນຄ່າສິນຄ້ານຳເຂົ້າສະເລ່ຍຕໍ່ເດືອນໃນປີ 2020 ແມ່ນນຳໃຊ້ 274,04 ລ້ານໂດລາ (ຕົວເລກຄາດຄະເນ) ຊຶ່ງບໍ່ລວມການນຳເຂົ້າສິນຄ້າທີ່ມີແຫຼ່ງທຶນຮອງຮັບຢູ່ຕ່າງປະເທດ. ໃນນັ້ນ, ລວມມີສິນຄ້າທີ່ໄດ້ຮັບນະໂຍບາຍການສົ່ງເສີມການລົງທຶນ ປະກອບດ້ວຍລະຫັດເສຍພາສີຫຼຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ; ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ; ຍົກເວັ້ນອາກອນມູນຄ່າເພີ່ມ, ເສຍພາສີ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມລົງທຶນ ແລະ ອື່ນໆ.

ຮູບທີ 8. ດຸນການຊໍາລະກັບຕ່າງປະເທດ




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2. ດຸນບັນຊີຊໍາລະປົກກະຕິ

ດຸນບັນຊີຊໍາລະປົກກະຕິ ເກີນດຸນຢູ່ໃນລະດັບ 47,86 ລ້ານໂດລາ, ຫຼຸດລົງ 112,49% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 130,21% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນດຸນການຄ້າ ເກີນດຸນ 153,45 ລ້ານໂດລາ.

ຮູບທີ 9. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 4.2.1 ດຸນການຄ້າ

ດຸນການຄ້າ ເກີນດຸນ 153,45 ລ້ານໂດລາ ຈາກຂາດດຸນ 337,13 ລ້ານໂດລາ ໃນໄຕມາດຜ່ານມາ. ສາເຫດຍ້ອນການນໍາເຂົ້າສິນຄ້າ ຫຼຸດລົງ 23,58% ຈາກເພີ່ມຂຶ້ນ 26,53% ໃນໄຕມາດຜ່ານມາ. ໃນຂະນະດຽວກັນ, ການສົ່ງອອກສິນຄ້າ ກໍເພີ່ມຂຶ້ນ ເມື່ອທຽບໃສ່ໄຕມາດຜ່ານມາ.

**ການນໍາເຂົ້າສິນຄ້າ:** ມີມູນຄ່າ 1.402,17 ລ້ານໂດລາ, ຫຼຸດລົງ 23,58% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 0,49% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍຂອງການຫຼຸດລົງຂອງການນໍາເຂົ້າສິນຄ້າໃນໄຕມາດນີ້ມີຫຼາຍປະເພດ ເປັນຕົ້ນແມ່ນເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນໆ ຫຼຸດລົງ 52,63%; ເຄື່ອງຈັກ ແລະ

ອຸປະກອນ ຫຼຸດລົງ 44,50%; ອາຫານ ແລະ ເຄື່ອງດື່ມ ຫຼຸດລົງ 24,94%; ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ຫຼຸດລົງ 21,03% ແລະ ຍານພາຫະນະ ຫຼຸດລົງ 16,59%. ສິນຄ້ານຳເຂົ້າຫຼັກໄດ້ແກ່: ນ້ຳມັນເຊື້ອໄຟ ກວມເອົາ 15,01%; ຮອງລົງມາແມ່ນ ອາຫານ ແລະ ເຄື່ອງດື່ມ ກວມເອົາ 14,48%; ເຄື່ອງຈັກ ແລະ ອຸປະກອນ ກວມເອົາ 10,46%; ເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນໆ ກວມເອົາ 9,11%; ຍານພາຫະນະ ແລະ ອຸປະກອນກ່ຽວຂ້ອງ ກວມເອົາ 9,03% ຂອງການນຳເຂົ້າທັງໝົດ.

**ຮູບທີ 10. ການນຳເຂົ້າສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການສົ່ງອອກສິນຄ້າ:** ມີມູນຄ່າ 1.555,62 ລ້ານໂດລາ, ເພີ່ມຂຶ້ນ 3,87% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 9,56% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການສົ່ງອອກເພີ່ມຂຶ້ນ ແມ່ນມາຈາກການເພີ່ມຂຶ້ນຂອງການສົ່ງອອກຜະລິດຕະພັນກະສິກຳ ເພີ່ມຂຶ້ນ 66,97% ແລະ ກະແສໄຟຟ້າ ເພີ່ມຂຶ້ນ 23,58% ເມື່ອທຽບໃສ່ໄຕມາດຜ່ານມາ. ສິນຄ້າສົ່ງອອກຫຼັກປະກອບມີ ກະແສໄຟຟ້າ ກວມເອົາ 26,42%; ຮອງລົງມາແມ່ນ ຜະລິດຕະພັນບໍ່ແຮ່ ກວມເອົາ 20,72%; ຜະລິດຕະພັນກະສິກຳ ກວມເອົາ 18,82%; ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ກວມເອົາ 7,84% ແລະ ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 5,96% ຂອງການສົ່ງອອກທັງໝົດ.

**ຮູບທີ 11. ການສົ່ງອອກສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.3. ດຸນບັນຊີການເງິນ

ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າ (ສຸດທິ) 352,14 ລ້ານໂດລາ, ຫຼຸດລົງ 30,78% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 47,02% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນມີກະແສເງິນລົງທຶນອື່ນໆໄຫຼອອກສຸດທິ ເປັນຕົ້ນແມ່ນການຊໍາລະເງິນກູ້ຢືມພາກເອກະຊົນ ເພີ່ມຂຶ້ນ ແລະ ການຫຼຸດລົງຂອງການລົງທຶນໃນຫຼັກຊັບ ຍ້ອນໃນໄຕມາດນີ້ບໍ່ມີທຸລະກໍາການຈໍາໜ່າຍ ຫຼື ຊໍາລະຄືນພັນທະບັດຂອງລັດຖະບານ ແລະ ເອກະຊົນ.

**ຮູບທີ 12. ດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານເດືອນ 12/2015 = 100)

| ໝວດສິນຄ້າ | ໄຕມາດ 1/2019 | ໄຕມາດ 2/2019 | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ** | **104,86** | **106,42** | **108,66** | **110,81** | **111,61** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 103,99 | 106,31 | 110,42 | 114,10 | 114,64 |
| 2. ໝວດເຫຼົ້າ ແລະ ຢາສູບ | 103,70 | 104,97 | 105,36 | 105,43 | 106,20 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 110,82 | 111,40 | 112,40 | 113,41 | 116,18 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 104,42 | 104,79 | 104,85 | 105,05 | 105,45 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 103,96 | 104,66 | 105,40 | 106,39 | 109,09 |
| 6. ໝວດການຮັກສາສຸຂະພາບ | 103,15 | 103,51 | 104,08 | 104,56 | 106,90 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 107,59 | 108,91 | 109,54 | 109,95 | 110,89 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 102,60 | 103,10 | 103,66 | 104,73 | 109,03 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 101,07 | 101,92 | 103,20 | 103,53 | 104,15 |
| 10. ໝວດການສຶກສາ | 101,33 | 101,35 | 102,27 | 103,00 | 103,30 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 105,42 | 106,70 | 106,81 | 106,67 | 107,17 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 104,61 | 105,23 | 107,19 | 108,85 | 111,63 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 2. ອັດຕາເງິນເຟີ້ (%)

| ໝວດສິນຄ້າ | ໄຕມາດ 1/2019 | ໄຕມາດ 2/2019 | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 |
|---|---|---|---|---|---|
| **ອັດຕາເງິນເຟີ້** | **1,58** | **2,41** | **3,42** | **5,85** | **6,44** |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 1,12 | 2,80 | 4,98 | 9,76 | 10,24 |
| 2. ໝວດເຫຼົ້າ ແລະ ຢາສູບ | 1,71 | 2,92 | 3,11 | 2,49 | 2,41 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 4,53 | 2,93 | 2,64 | 3,10 | 4,83 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 1,03 | 1,03 | 0,67 | 0,80 | 0,99 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 1,59 | 1,74 | 2,14 | 3,01 | 4,93 |
| 6. ໝວດການຮັກສາສຸຂະພາບ | 1,16 | 1,43 | 1,72 | 1,66 | 3,63 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 2,53 | 2,80 | 1,83 | 1,58 | 3,07 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 1,42 | 1,56 | 1,94 | 2,75 | 6,27 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 0,84 | 1,60 | 2,96 | 3,27 | 3,04 |
| 10. ໝວດການສຶກສາ | 0,39 | 0,37 | 1,23 | 1,72 | 1,94 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 1,63 | 1,90 | 2,16 | 1,98 | 1,66 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 1,02 | 1,25 | 3,97 | 5,09 | 6,70 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ)

| ລາຍການ | ໄຕມາດ 1/2019 | ໄຕມາດ 2/2019 | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **6.992,16** | **6.908,89** | **6.571,35** | **8.224,86** | **8.359,95** |
| ຊັບສິນຕ່າງປະເທດ | 7.603,14 | 7.525,25 | 7.187,81 | 8.853,58 | 8.987,64 |
| ໜີ້ສິນຕ່າງປະເທດ | -610,98 | -616,36 | -616,46 | -628,72 | -627,69 |
| **ຊັບສິນພາຍໃນສຸດທິ** | **17.747,07** | **17.543,33** | **18.656,57** | **19.100,40** | **20.476,62** |
| **ສິນເຊື່ອພາຍໃນສຸດທິ** | **13.681,60** | **12.841,35** | **13.664,32** | **14.199,58** | **15.596,54** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 477,50 | -401,78 | 335,39 | 839,17 | 2.207,44 |
| ສິນເຊື່ອໃຫ້ລັດຖະບານ | 2.186,94 | 2.763,62 | 2.746,82 | 2.746,82 | 4.793,96 |
| ເງິນຝາກລັດຖະບານ | -1.709,44 | -3.165,40 | -2.411,43 | -1.907,65 | -2.586,52 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 6.274,53 | 6.293,71 | 6.359,29 | 6.379,03 | 6.117,29 |
| ສິນເຊື່ອໃຫ້ລັດວິສາຫະກິດ | 6.274,53 | 6.293,71 | 6.359,29 | 6.379,03 | 6.117,29 |
| ສິນເຊື່ອໃຫ້ສະຖາບັນການເງິນ | 6.929,57 | 6.949,42 | 6.969,64 | 6.981,39 | 7.271,81 |
| ພັນທະບັດທະນາຄານກາງ | -2.526,64 | -2.545,16 | -2.593,96 | -2.886,41 | -2.920,64 |
| ລາຍການອື່ນໆສຸດທິ | 6.592,11 | 7.247,14 | 7.586,21 | 7.787,22 | 7.800,72 |
| **ຖານເງິນຕາ** | **24.739,22** | **24.452,22** | **25.227,92** | **27.325,26** | **28.836,57** |
| ເງິນສົດຢູ່ຂອດຈໍລະຈອນ | 9.379,23 | 9.601,86 | 9.778,70 | 10.990,13 | 11.145,67 |
| ເງິນຝາກ | 15.359,99 | 14.850,36 | 15.449,22 | 16.335,13 | 17.690,90 |
| ເງິນຝາກກະແສລາຍວັນ | 11.449,43 | 10.921,60 | 11.418,89 | 11.895,26 | 12.844,86 |
| ເງິນແຮຝາກບັງຄັບ | 3.649,73 | 3.707,78 | 3.853,85 | 3.860,49 | 4.166,80 |
| ທຶນຈົດທະບຽນຂອງ ທທກ | 142,71 | 152,35 | 110,77 | 534,53 | 647,26 |
| ເງິນຝາກຂອງພາກສ່ວນອື່ນໆ | 118,12 | 68,63 | 65,71 | 44,85 | 31,98 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ)

| ລາຍການ | ໄຕມາດ 1/2019 | ໄຕມາດ 2/2019 | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-14.665,95** | **-15.254,72** | **-13.495,34** | **-15.485,24** | **-16.108,99** |
| ຊັບສິນຕ່າງປະເທດ | 10.761,66 | 9.953,61 | 12.756,84 | 11.915,42 | 12.467,04 |
| ໜີ້ສິນຕ່າງປະເທດ | -25.427,61 | -25.208,33 | -26.252,18 | -27.400,66 | -28.576,03 |
| **ຄັງສະສົມສຸດທິ** | **24.093,39** | **25.142,24** | **25.521,89** | **28.894,61** | **32.108,98** |
| ຄັງສະສົມ | 30.375,56 | 31.379,98 | 31.791,24 | 34.261,18 | 37.372,67 |
| ເງິນກູ້ຢືມຈາກ ທຫລ | -6.282,17 | -6.237,74 | -6.269,34 | -5.366,57 | -5.263,69 |
| **ສິນເຊື່ອໃຫ້ລັດຖະບານສຸດທິ** | **3.650,76** | **3.251,54** | **3.674,29** | **3.747,83** | **3.163,02** |
| ເປັນສະກຸນເງິນກີບ | 4.334,20 | 3.900,64 | 4.113,32 | 4.496,28 | 3.845,13 |
| ເປັນສະກຸນເງິນຕາຕ່າງປະເທດ | -683,44 | -649,10 | -439,03 | -748,45 | -682,10 |
| **ຊັບສິນພາຍໃນສຸດທິ (ຍົກເວັ້ນສິນເຊື່ອໃຫ້ລັດຖະບານ)** | **63.926,56** | **66.182,97** | **67.460,22** | **70.402,92** | **71.204,41** |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 69.764,07 | 71.368,63 | 72.339,03 | 74.628,28 | 75.279,63 |
| ເປັນສະກຸນເງິນຕາຕ່າງປະເທດ | 35.856,57 | 37.090,42 | 37.275,63 | 38.686,21 | 38.945,77 |
| ສິນເຊື່ອໃຫ້ພາກເອກະຊົນ | 63.997,24 | 65.181,72 | 66.303,46 | 68.543,63 | 69.399,41 |
| ເປັນສະກຸນເງິນຕາຕ່າງປະເທດ | 30.456,05 | 31.273,92 | 31.579,84 | 32.994,90 | 33.463,57 |
| ສິນເຊື່ອໃຫ້ພາກສ່ວນລັດວິສາຫະກິດ | 5.766,83 | 6.186,91 | 6.035,57 | 6.084,65 | 5.880,22 |
| ເປັນສະກຸນເງິນຕາຕ່າງປະເທດ | 5.400,52 | 5.816,50 | 5.695,79 | 5.691,32 | 5.482,20 |
| **ຊັບສິນອື່ນໆສຸດທິ** | **-5.837,51** | **-5.185,66** | **-4.878,81** | **-4.225,36** | **-4.075,22** |
| **ເງິນຝາກລູກຄ້າ** | **77.004,74** | **79.322,02** | **83.161,05** | **87.560,12** | **90.367,43** |
| ເປັນເງິນກີບ | 35.048,34 | 36.388,80 | 37.960,01 | 40.090,21 | 42.060,45 |
| ເປັນສະກຸນເງິນຕາຕ່າງປະເທດ | 41.956,40 | 42.933,22 | 45.201,05 | 47.469,91 | 48.306,98 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ)

| ລາຍການ | ໄຕມາດ 1/2019 | ໄຕມາດ 2/2019 | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-7.673,79** | **-8.345,83** | **-6.923,99** | **-7.260,38** | **-7.749,04** |
| ຊັບສິນຕ່າງປະເທດ | 18.364,80 | 17.478,86 | 19.944,65 | 20.769,00 | 21.454,67 |
| ໜີ້ສິນຕ່າງປະເທດ | -26.038,59 | -25.824,69 | -26.868,64 | -28.029,38 | -29.203,72 |
| **ຊັບສິນພາຍໃນສຸດທິ** | **91.779,27** | **94.879,38** | **97.453,05** | **103.446,72** | **106.743,54** |
| **ສິນເຊື່ອພາຍໃນ** | **80.166,86** | **80.512,10** | **82.707,99** | **85.594,31** | **86.767,39** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 4.128,26 | 2.849,76 | 4.009,68 | 4.587,00 | 5.370,46 |
| ສິນເຊື່ອໃຫ້ລັດຖະບານ | 8.938,46 | 8.859,71 | 8.680,80 | 8.799,27 | 10.506,51 |
| ເງິນຝາກລັດຖະບານ | -4.810,20 | -6.009,95 | -4.671,12 | -4.212,27 | -5.136,05 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 76.038,60 | 77.662,34 | 78.698,31 | 81.007,30 | 81.396,92 |
| ສິນເຊື່ອໃຫ້ລັດວິສາຫະກິດ | 12.041,36 | 12.480,62 | 12.394,85 | 12.463,67 | 11.997,51 |
| ສິນເຊື່ອໃຫ້ພາກເອກະຊົນ | 63.997,24 | 65.181,72 | 66.303,46 | 68.543,63 | 69.399,41 |
| ລາຍການອື່ນໆສຸດທິ | 11.612,41 | 14.367,28 | 14.745,06 | 17.852,41 | 19.976,15 |
| **ປະລິມານເງິນຕາມຄວາມໝາຍກວ້າງ** | **84.105,45** | **86.533,55** | **90.529,06** | **96.186,33** | **98.994,50** |
| **ປະລິມານເງິນຄວາມໝາຍແຄບ** | **11.398,81** | **11.835,63** | **11.898,25** | **13.785,64** | **14.552,91** |
| ເງິນຢູ່ນອກລະບົບທະນາຄານ | 6.982,59 | 7.142,90 | 7.302,29 | 8.581,37 | 8.595,10 |
| ເງິນຝາກກະແສລາຍວັນ | 4.416,22 | 4.692,73 | 4.595,96 | 5.204,28 | 5.957,81 |
| **ປະລິມານເງິນປະເພດອື່ນໆ** | **72.706,64** | **74.697,92** | **78.630,81** | **82.400,69** | **84.441,58** |
| ເງິນຝາກປະຢັດ ແລະ ຝາກມີກຳນົດ | 30.750,24 | 31.764,70 | 33.429,76 | 34.930,78 | 36.134,60 |
| ເງິນຝາກເປັນເງິນຕາຕ່າງປະເທດ | 41.956,40 | 42.933,22 | 45.201,05 | 47.469,91 | 48.306,98 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (ຕື້ກີບ)

| ລາຍການ | ໄຕມາດ 1/2019 | ໄຕມາດ 2/2019 | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 |
|---|---|---|---|---|---|
| **ທະນາຄານທຸລະກິດລັດ + ທະນາຄານສະເພາະກິດ** | | | | | |
| **ຍອດຊັບສິນ (ຕື້ກີບ)** | **59.719,45** | **59.952,83** | **62.558,45** | **63.021,68** | **65.618,51** |
| ອັດຕາສ່ວນ (%) | 43,93 | 43,79 | 43,75 | 43,14 | 43,58 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 6,58 | 0,39 | 4,35 | 0,74 | 4,12 |
| **ທະນາຄານຮ່ວມທຶນ** | | | | | |
| **ຍອດຊັບສິນ (ຕື້ກີບ)** | **12.600,84** | **12.242,52** | **12.804,00** | **12.803,28** | **13.413,10** |
| ອັດຕາສ່ວນ (%) | 9,27 | 8,94 | 8,96 | 8,76 | 8,91 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 2,40 | -2,84 | 4,59 | -0,01 | 4,76 |
| **ທະນາຄານເອກະຊົນ** | | | | | |
| **ຍອດຊັບສິນ (ຕື້ກີບ)** | **24.264,83** | **25.122,49** | **26.598,28** | **27.809,28** | **28.343,44** |
| ອັດຕາສ່ວນ (%) | 17,85 | 18,35 | 18,60 | 19,04 | 18,82 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | -0,64 | 3,53 | 5,87 | 4,55 | 1,92 |
| **ທະນາຄານສາຂາຕ່າງປະເທດ** | | | | | |
| **ຍອດຊັບສິນ (ຕື້ກີບ)** | **39.361,79** | **39.586,38** | **41.014,86** | **42.450,80** | **43.199,98** |
| ອັດຕາສ່ວນ (%) | 28,95 | 28,92 | 28,69 | 29,06 | 28,69 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,61 | 0,57 | 3,61 | 3,50 | 1,76 |
| **ລວມທັງໝົດ** | | | | | |
| **ຍອດຊັບສິນ (ຕື້ກີບ)** | **135.946,91** | **136.904,22** | **142.975,59** | **146.085,04** | **150.575,03** |
| ອັດຕາສ່ວນ (%) | 100,00 | 100,00 | 100,00 | 100,00 | 100,00 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,26 | 0,70 | 4,43 | 2,17 | 3,07 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ

| ໄຕມາດ/ປີ | ກີບ/ໂດລາ | | | ກີບ/ບາດ | | |
|---|---|---|---|---|---|---|
| | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ |
| ໄຕມາດ 1/2012 | 8.003,56 | 8.006,44 | **8.005,00** | 259,36 | 259,43 | **259,40** |
| ໄຕມາດ 2/2012 | 8.006,93 | 8.008,79 | **8.007,86** | 256,95 | 257,26 | **257,11** |
| ໄຕມາດ 3/2012 | 8.013,92 | 8.014,84 | **8.014,38** | 256,16 | 255,85 | **256,01** |
| ໄຕມາດ 4/2012 | 8.000,22 | 8.002,76 | **8.001,49** | 261,22 | 261,09 | **261,16** |
| ໄຕມາດ 1/2013 | 7.897,90 | 7.904,22 | **7.901,06** | 265,12 | 264,92 | **265,02** |
| ໄຕມາດ 2/2013 | 7.692,53 | 7.691,30 | **7.691,92** | 258,72 | 258,50 | **258,61** |
| ໄຕມາດ 3/2013 | 7.815,12 | 7.939,30 | **7.877,21** | 249,97 | 255,04 | **252,51** |
| ໄຕມາດ 4/2013 | 7.935,95 | 8.007,74 | **7.971,84** | 251,61 | 254,01 | **252,81** |
| ໄຕມາດ 1/2014 | 8.029,33 | 8.055,14 | **8.042,23** | 247,44 | 252,11 | **249,77** |
| ໄຕມາດ 2/2014 | 8.050,00 | 8.066,23 | **8.058,11** | 249,75 | 250,83 | **250,29** |
| ໄຕມາດ 3/2014 | 8.043,06 | 8.078,12 | **8.060,59** | 251,60 | 251,70 | **251,65** |
| ໄຕມາດ 4/2014 | 8.059,67 | 8.078,93 | **8.069,30** | 248,51 | 250,67 | **249,59** |
| ໄຕມາດ 1/2015 | 8.108,95 | 8.145,80 | **8.127,37** | 250,30 | 247,48 | **248,89** |
| ໄຕມາດ 2/2015 | 8.104,36 | 8.116,02 | **8.110,19** | 246,78 | 247,77 | **247,28** |
| ໄຕມາດ 3/2015 | 8.160,49 | 8.211,00 | **8.185,74** | 235,57 | 237,05 | **236,31** |
| ໄຕມາດ 4/2015 | 8.151,05 | 8.205,25 | **8.178,15** | 229,52 | 230,24 | **229,88** |
| ໄຕມາດ 1/2016 | 8.134,21 | 8.166,02 | **8.150,12** | 229,75 | 229,77 | **229,76** |
| ໄຕມາດ 2/2016 | 8.113,33 | 8.135,37 | **8.124,35** | 231,50 | 231,89 | **231,70** |
| ໄຕມາດ 3/2016 | 8.095,42 | 8.160,44 | **8.127,93** | 233,80 | 234,49 | **234,15** |
| ໄຕມາດ 4/2016 | 8.160,74 | 8.469,57 | **8.315,16** | 232,39 | 240,13 | **236,26** |
| ໄຕມາດ 1/2017 | 8.194,25 | 8.470,05 | **8.332,15** | 235,14 | 239,73 | **237,44** |
| ໄຕມາດ 2/2017 | 8.213,55 | 8.493,84 | **8.353,69** | 241,47 | 247,01 | **244,24** |
